**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 45 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 / 06 / 22

## ມະຕິ

## ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ວ່າດ້ວຍການຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015, ໝວດທີ V, ມາດຕາ 53 ຂໍ້ 11;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 12 ຂໍ້ 3.2.6;
- ອີງຕາມ ຄຳສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 34/ນຍ, ລົງວັນທີ 17 ມິຖຸນາ 2022.

ຜ່ານການຄົ້ນຄວ້າພິຈາລະນາ, ປະກອບຄຳຄິດຄຳເຫັນຢ່າງເລິກເຊິ່ງຖີ່ຖ້ວນ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຕໍ່ການສະເໜີຂອງນາຍົກລັດຖະມົນຕີ ກ່ຽວກັບການພິຈາລະນາ, ຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ ຢູ່ໃນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃນວາລະຕອນເຊົ້າວັນທີ 20 ມິຖຸນາ 2022.

### ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ສະມາຊິກລັດຖະບານຈຳນວນ 04 ທ່ານ ດັ່ງລາຍຊື່ລຸ່ມນີ້:

1. ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ປອ ຄຳແພງ ໄຊສົມແພງ** ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ໄປຮັບໜ້າທີ່ໃໝ່, ເປັນລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ;
2. ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ສອນໄຊ ສິດພະໄຊ** ຜູ້ວ່າການທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປຮັບໜ້າທີ່ໃໝ່, ເປັນລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ;
3. ແຕ່ງຕັ້ງ **ທ່ານ ມະໄລທອງ ກົມມະສິດ** ເປັນລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ;
4. ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ** ຮອງລັດຖະມົນຕີກະຊວງການເງິນ ໄປຮັບໜ້າທີ່ໃໝ່, ເປັນຜູ້ວ່າການທະນາຄານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 2** ບັນດາອົງການຈັດຕັ້ງ ພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ, ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ